ກອງທຶນ ສົ່ງເສີມນະວັດຕະກຳທາງດ້ານກະສິກຳໃນອາຊຽນ

ແບບຮ່າງແນວຄິດໂຄງການ

ກອງທຶນ ສົ່ງເສີມນະວັດຕະກຳທາງດ້ານກະສິກຳ ໃນອາຊຽນ

- ໃຫ້ການສະໜັບສະໜູນການປະຕິບັດຕົວຈິງດ້ານນະວັດຕະກຳ ແລະ ຫາທາງແກ້ໄຂບັນຫາ ຄຸນນະພາບ ແລະ ຄວາມຍືນຍົງໃນຕ່ອງໂສ້ມູນຄ່າສິນຄ້າກະສິກຳ;
- ສະໜັບສະໜູນການຈັດຕັ້ງປະຕິບັດໂຄງການກ່ຽວກັບການປະຕິບັດຕົວຈິງດ້ານນະວັດຕະກຳ, ລະບົບ, ເຄື່ອງມື, ບັນຫາ ເຕັກໂນໂລຊີ ແລະ ການປະຕິບັດທີ່ດີ ທີ່ມີຢູ່ໃນປັດຈຸບັນໃຫ້ເປັນມິດຕໍ່ສິ່ງແວດລ້ອມ ແລະ ຊ່ວຍໃນການປັບຕົວໃຫ້ເຂົ້າ ກັບການປ່ຽນແປງຂອງສະພາບດິນຟ້າອາກາດ;
- ສະໜັບສະໜູນຄູ່ຮ່ວມມືພາກເອກະຊົນ ໃນການເພີ່ມທະວີຜົນການດຳເນີນທຸລະກິດຂອງພວກເຂົາ ແລະ ນຳໃຊ້ ປະໂຫຍດຈາກຄວາມຊ່ຽວຊານຂອງພາກເອກະຊົນ ແລະ ເງິນທຶນ ເພື່ອບັນລຸເປົ້າໝາຍດ້ານນະໂຍບາຍຂອງພາກລັດ;
- ການເປັນຄູ່ຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ແລະ ການຮ່ວມມືກັນ ຊຶ່ງສະໜັບສະໜູນໂດຍ ອົງການ GIZ;
- ໃຫ້ການສະໜັບສະໜູນເງິນທຶນໃຫ້ແກ່ໂຄງການໃນສີ່ປະເທດ: ກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ;
- ແນວຄິດໂຄງການທີ່ສະເໜີແມ່ນຈະຖືກຄັດເລືອກ ແລະ ອອກແບບຮ່ວມກັນກັບຄູ່ຮ່ວມມືພາກເອກະຊົນ, ອົງການ GIZ ແລະ ຜູ້ສະນະການຄັດເລືອກໃນແຕ່ລະປະເທດ;
- ຜູ້ຊະນະກອງທຶນສາມາດຈັດຕັ້ງປະຕິບັດໂຄງການ ໂດຍຜ່ານຜູ້ສະໜອງການໃຫ້ບໍລິການທີ່ເອີ້ນວ່າບຸກຄົນທີສາມໄດ້;
- ສາມາດປະກອບສ່ວນເງິນທຶນຕໍ່ບົດສະເໜີໂຄງການໜຶ່ງສູງເຖິງ 20.000 ເອີໂຣ, ແລະ ສູງສຸດ 40.000 ເອີໂຣໃນກໍລະນີ ທີ່ບົດສະເໜີໂຄງການສະແດງເຫດຜົນໄດ້ດີ ເພື່ອນຳໃຊ້ເຂົ້າໃນຄ່າໃຊ້ຈ່າຍທີ່ປຶກສາ, ການສ້າງຂີດຄວາມສາມາດ, ອັດສະ ດຸອຸປະກອນຕ່າງໆ, ເຕັກໂນໂລຊີ ແລະ ການຊ່ວຍເຫຼືອທາງດ້ານຕັກນິກ;
- ຮຽກຮ້ອງໃຫ້ປະກອບສ່ວນສົມທົບທຶນຈາກຜູ້ສະໜັກຂໍທຶນ ຈະເປັນເງິນ ຫຼື ວັດຖຸປັດໄຈອື່ນໆທີ່ບໍ່ແມ່ນເງິນກໍໄດ້, ຕົວຢ່າງ, ຖ້າຫາກ ຄ່າໃຊ້ຈ່າຍຂອງໂຄງການທັງໝົດ ແມ່ນ 36.000 ເອີໂຣ, ການປະກອບສ່ວນສູງສຸດຈາກກອງທຶນ ຈະແມ່ນ 18.000 ເອີໂຣ.

ໃຜສາມາດສະໝັກຂໍທຶນໄດ?

ອົງການຈັດຕັ້ງຜູ້ຜະລິດ ຂະໜາດນ້ອຍ

ຜູ້ປຸງແຕ່ງ ແລະ ຜູ້ສົ່ງອອກ

ຜູ້ຈັດຈຳໜ່າຍ

ຜູ້ໃຫ້ບໍລິການສະໜອງປັດ ໄຈການຜະລິດກະສິກຳ

ມາດຖານທົ່ວໄປຂອງຜູ້ສະໝັກຂໍທຶນ

ກະລຸນາລະບຸເນື້ອໃນດ້ັງລຸ່ມນີ້:

- ອະທິບາຍໂດຍຫຍໍ້ກ່ຽວກັບອົງການຈັດຕັ້ງຂອງທ່ານ ໂດຍການຕື່ມຂໍ້ມູນໃສ່ໃນແບບຮ່າງ
- ແນວຄິດໂຄງການທີ່ທ່ານຕ້ອງການໃຫ້ສະໜັບສະໜູນ ແລະ ທ່ານຕ້ອງການການສະໜັບສະໜູນດ້ານໃດໃນ ການຈັດຕັ້ງປະຕິບັດໂຄງການ
- ພັນທະສັນຍາໃນທຸລະກິດຂອງທ່ານ ຕໍ່ກັບບັນຫາຄວາມຍືນຍົງ, ໃຫ້ອະທິບາຍວ່າ ແນວຄິດຂອງທ່ານສອດຄ່ອງກັບ ມາດຖານຂອງການຄັດເລືອກແນວໃດ*

*ບົດສະເໜີໂຄງການ ຖືກປະເມີນຜົນ ອີງຕາມມາດຖານທີ່ຕ້ອງຜ່ານຂອງຜູ້ສະໜັກຂໍທຶນ ແລະ ມາດຖານການຄັດເລືອກບົດສະເໜີໂຄງການຂອງກອງທຶນກ່ານົດໄວ້.

ອະທິບາຍໂດຍຫຍໍ້ກ່ຽວກັບອົງການຈັດຕັ້ງຂອງທ່ານ

ຊື່ອົງການຈັດຕັ້ງ	
ຜູ້ຕິດຕໍ່	
ເບີໂທລະສັບ	
ອີເມວ	
ເວັບໄຊ້:	
ປີສ້າງຕັ້ງ	
ທຶນຈົດທະບຽນ	
ທີມຄຸ້ມຄອງຈັດການ & ຄວາມ ຮັບຜິດຊອບ	
ຈຳນວນພະນັກງານ	
ປະເພດທຸລະກິດ	☐ ອົງການຈັດຕັ້ງຜູ້ຜະລິດ ☐ ຜູ້ປຸງແຕ່ງເອກະຊົນ ☐ ຜູ້ສົ່ງອອກ ☐ ຜູ້ສະໜອງບໍລິການ ອື່ນໆ, ກະລຸນາລະບຸ:
ຜະລິດຕະພັນຕົ້ນຕໍ	
ຄວາມສາມາດໃນການຜະລິດຕໍ່ປີ (ໂຕນ)	
ຕະຫຼາດຫຼັກ	
ສ່ວນແບ່ງຕະຫຼາດ	ພາຍໃນ % ສົ່ງອອກ %
ລາຍຮັບສົ່ງອອກ (USD) (ຖ້າມີ)	2018 2019
ຕະຫຼາດເປົ້າໝາຍ	
ຍອດຂາຍທີ່ຄາດໄວ້ (USD)	2020 2021

ໝາຍເຫດ: ຖ້າທ່ານບໍ່ສາມາດຕື່ມຟອມເນື່ອງຈາກມີບັນຫາເລື່ອງປະເພດຕົວອັກສອນກະລຸນາ download link | Adobe website

ແນວຄິດຂອງໂຄງການ

ກະລຸນາຂຽນແນວຄວາມຄິດສະບັບຫຍໍ້ຂອງທ່ານໃສ່ບ່ອນນີ້ (ສູງສຸດບໍ່ກາຍ 1,000 ຄຳ)

- ທ່ານກຳລັງຄິດຫານະວັດຕະກຳທາງດ້ານກະສິກຳປະເພດໃດ?
- ການວິເຄາະສະພາບການ: ລະບຸບັນຫາ / ໂອກາດທີ່ທ່ານຕ້ອງການແກ້ໄຂ
- ອະທິບາຍແນວຄວາມຄິດຂອງທ່ານແລະວິທີການແກ້ໄຂບັນຫາ /ໂອກາດ
- ລະບຸພື້ນທີ່ຈຸດສຸມຂອງແນວຄວາມຄິດຂອງທ່ານເຊັ່ນ: ການຜະລິດແລະການປຸງແຕ່ງ, ການແກ້ໄຂບັນຫາດິຈິຕອນ, ການຕະຫລາດແລະການເຂົ້າເຖິງຕະຫລາດ, ການຮ່ວມມືຕາມຕ່ອງໂສ້ມູນຄ່າ
- ກຳນົດຕະຫຼາດສຳລັບຜະລິດຕະພັນທີ່ມີນະວັດຕະກຳຂອງທ່ານ (ເຊັ່ນ: ສ່ວນຕະຫຼາດ, ລູກຄ້າສະເພາະ.)
- ຜົນປະໂຫຍດໂດຍກົງຈາກແນວຄວາມຄິດຂອງທ່ານຕໍ່ອົງກອນ ຫລື ອົງການຈັດຕັ້ງ ຫລືທຸລະກິດຂອງທ່ານ
- ຜົນປະໂຫຍດທາງກົງແລະທາງອ້ອມຕໍ່ຄູ່ຄ້າທຸລະກິດຂອງທ່ານ.
- ການລົງທຶນສະເພາະທີ່ ຈຳເປັນເພື່ອພັດທະນາແນວຄວາມຄິດ
- ຄ່າໃຊ້ຈ່າຍໂດຍປະມານຂອງການສະໜັບສະໜູນທີ່ຕ້ອງການຈາກກອງທຶນ, ແລະ ການລົບທຶບຈາກສ່ວນຂອງທ່ານເອງ

ຄວາມມ່ງໝັ້ນຂອງທລະກດທານ & ຄວາມຍນຍ່ງ

ກະລຸນາຂຽນແນວຄວາມຄິດສະບັບຫຍໍ້ຂອງທ່ານໃສ່ບ່ອນນີ້ (ສູງສຸດບໍ່ກາຍ 500 ຄຳ)

- ເປັນຫຍັງກອງທຶນຄວນຈະສະໜັບສະໜັບສະໜູນໜ່ວຍງານຂອງທ່ານ ຫລື ແນວຄວາມຄິດຂອງທ່ານ?
- ວິໄສທັດຕໍ່ອົງການຈັດຕັ້ງຂອງທ່ານ
- ຄວາມສຳພັນກັນລະຫວ່າງທຸລະກິດຂອງທ່ານກັບຊາວກະສິກອນຂະໜາດນ້ອຍ
- ທ່ານວາງແຜນແນວໃດເພື່ອຂະຫຍາຍນະວັດຕະກຳໃນໄວຍະຍາວ?
- ແນວຄິດນະວັດຕະກຳຊອງທ່ານມີຜົນຕໍ່ກັບຕ່ອງໂສ້ມູນຄ່າ, ຕ່ຳຊຸມຊົນ ແລະ ຕ່ສິ່ງແວດລ້ອມແບບໃດ?
- ແນວຄວາມຄິດຂອງທ່ານມີນະວັດຕະກຳຢູ່ໃນຮູບແບບໃດ?
- ແນວຄວາມຄິດຂອງທ່ານສາມາດຖືກນຳມາໃຊ້ຄືນ ຫຼື ບັບຂະຫຍາຍໄດ້ແນວໃດ?

ມາດຖານທຕອງຜານຂອງຜູສະໜມກຂທນ

ມາດຖານທາງດ້ານຕ້ກນິກ

- ຕ້ອງເປັນຜູ້ຜະລິດທີ່ໄດ້ຈົດທະບຽນແລ້ວ ແລະ ມີສະມາຊິກຢ່າງໜ້ອຍທີ່ສຸດ 10 ຄົນ;
- ຕ້ອງເປັນບໍລິສັດເອກະຊົນທີ່ຂຶ້ນທະບຽນແລ້ວ ໂດຍຢ່າງໜ້ອຍທີ່ສຸດມີພະນັກງານໜຶ່ງຄົນທີ່ເຮັດວຽກໃນຂົງເຂດການຜະລິດ, ການປຸງແຕ່ງ, ການຕະຫຼາດ ພາຍໃນ/ຂາຍຍົກ/ຂາຍຍ່ອຍ; ຫຼື
- ຕ້ອງເປັນບໍລິສັດເອກະຊົນທີ່ຂຶ້ນທະບຽນແລ້ວ ໂດຍຢ່າງໜ້ອຍທີ່ສຸດມີພະນັກງານໜຶ່ງຄົນທີ່ເຮັດວຽກໃນການໃຫ້ບໍລິການ & ຂົງເຂດອື່ນໆ.
- ຕ້ອງສະແດງໃຫ້ເຫັນຄວາມສາມາດໃນການຈັດຕັ້ງປະຕິບັດ ແລະ ການນຳພາໂຄງການ;
- ຕ້ອງມີສ່ວນຮ່ວມໃນວຽກງານ ແລະ ມີຄວາມມຸ່ງຫວັງທີ່ຈະຖ່າຍທອດໃຫ້ຄົນອື່ນ ຊຶ່ງມັນເປັນຈຸດມຸ່ງໝາຍໜຶ່ງຂອງໂຄງການ;
- ຜູ້ສະໜັກຕ້ອງມີຄວາມສະໜັກໃຈໃນການສົມທົບທຶນຂອງຕົນເອງເຂົ້າໃນກອງທຶນ ທີ່ໄດ້ສະເໜີໄປແລ້ວນັ້ນໃນຮູບແບບເງິນ ຫຼື ເປັນວັດຖຸສິ່ງຂອງ;
- ກອງທຶນນີ້ ແມ່ນສະໜອງໂອ້ສະເພາະໃຫ້ແກ່ບັນດາປະເທດຈຸດສຸມທີ່ຄັດເລືອກເທົ່ານັ້ນ ຄື (CLMV)

ຄວາມຮັບຜິດຊອບຕໍ່ສັງຄົມ & ສິ່ງແວດລ້ອມ

- ພັນທະສັນຍາທີ່ສະແດງໃຫ້ເຫັນກ່ຽວກັບການດຳເນີນທຸລະກິດແບບຍືນຍົງ ແລະ ມີສ່ວນຮ່ວມ;
- ຍິນດີທີ່ຈະເຮັດວຽກ ເພື່ອຜົນປະໂຫຍດຮ່ວມກັນໃນຕ່ອງໂສ້ການສະໜອງ, ໂດຍສະເພາະ ບັນດາຊາວສວນຂະໜາດນ້ອຍ, ອົງການຈັດຕັ້ງຜູ້ຜະລິດ, ໄວໜຸ່ມ ແລະ ແມ່ຍິງ;
- ແນວທາງຕ່າງໆແມ່ນເອື້ອອຳນວຍໃນການຫຼຸດຜ່ອນສານມົນລະພິດ GHG ແລະ/ຫຼື ສະໜັບສະໜູນການປັບຕົວໃຫ້ເຂົ້າກັບການປ່ຽນແປງຂອງສະພາບດິນຟ້າອາກາດ
- ຍິນດີແບ່ງປັນປະສົບການ ແລະ ການຮຽນຮູ້ກັບບັນດາຜູ້ມີສ່ວນກ່ຽວຂ້ອງອື່ນໆ ຜ່ານການຮຽນຮູ້ ແລກປ່ຽນບົດຮຽນຮ່ວມກັນໃນຮູບແບບເພື່ອນ-ກັບ-ເພື່ອນ;
- ປະກອບສ່ວນເຂົ້າໃນການພັດທະນາທີ່ຍືນຍົງໃນຂະແໜງກະສິກຳ, ການຄຸ້ມຄອງຊັບພະຍາກອນທຳມະຊາດ, ການພັດທະນາຊົນນະບົດ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ.

ເງອນໄຂການຄດເລອກ

ທ່າແຮງທີ່ພາໃຫ້ເກີດຜົນກະທົບ

ບົດສະເໜີຂອງຜູ້ສະໜັກຄວນລະບຸວ່າຈະສາມາດສົ່ງຜົນກະທົບໃນທາງບວກ(ໂດຍກົງຫຼືໂດຍທາງອ້ອມ)ແນວໃດ ຕໍ່ລະບົບຕ່ອງໂສ້ມູນຄ່າໃນປະເທດໜຶ່ງ ຫຼື ປະເທດກຸ່ມເປົ້າໝາຍ

ນະວັດຕະກຳ

ບົດສະເໜີໂຄງການ ຕ້ອງນຳໜ້າທາງດ້ານແນວຄິດນະວັດຕະກຳໃໝ່ສຳລັບລະບົບ ແລະ ຜະລິດຕະພັນທີ່ຍັງບໍ່ທັນໄດ້ຖືກຈັດຕັ້ງປະຕິບັດໃນຂົງເຂດ, ປະເທດ, ຫຼື ພາກພື້ນ

ການມີສ່ວນຮ່ວມ

ບົດສະເໜີ ຕ່າງໆຕ້ອງສະແດງໃຫ້ເຫັນວິທີການທີ່ຊາວໜຸ່ມ ແລະແມ່ຍິງໃນຊຸມຊົນສາມາດມີສ່ວນຮ່ວມແລະໄດ້ຮັບຜົນປະໂຫຍດຮ່ວມກັນ

ສາມາດເຮັດຊ້ຳຄືນໄດ້

ບົດສະເໜີທີ່ເໝາະສົມຄວນມີລະດັບຄວາມສາມາດໃນການຫຼຸນໃຊ້ໃນຂົງເຂດ, ປະເທດ ຫຼື ພາກພື້ນອື່ນ

ຄວາມສາມາດໃນການຂະຫຍາຍ

ບົດສະເໜີໂຄງການໃຫ້ມີ ວິໄສທັດສຳລັບ ການຂະຫຍາຍຜະລິດຕະພັນ ແລະ ລະບົບທີ່ພັດທະນາຂຶ້ນພາຍໃຕ້ກອງທຶນໃນອະນາຄົດໄດ້.

ສົ່ງແບບຮ່າງແນວຄິດໂຄງການເຖິງ: agrinnovationfund@giz.de
ພວກເຮົາລໍຖ້າທີ່ຈະໄດ້ຮັບແນວຄິດໂຄງການນະວັດຕະກຳຂອງທ່ານຢູ່!

ບໍ່ມີສິດຕາມກົດໝາຍໃນການລະດົມທຶນຈາກໂຄງການນີ້.
ຂໍ້ມູນທີ່ທ່ານໃຫ້ ຈະຖືກບັນທຶກໄວ້ ເພື່ອຈຸດປະສົງໃນການສື່ສານ ແລະ ການປະເມີນຜົນຂັ້ນຕອນພາຍໃນ GIZ.